ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 9: Miracle Stories

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 4:** ນິທານມະຫັດສະຈັນ
**ຜູ້ບັນຍາຍ:** ອຈ.ປທ. ສິມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

ເວລາ: 90 ນາທີ

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ຄວາມໝາຍ ແລະ ຈຸດພິເສດຂອງນິທານມະຫັດສະຈັນ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານມະຫັດສະຈັນ<br>- ເນື້ອໃນສ່ອງແສງຂອງນິທານມະຫັດສະຈັນ<br>- ສິລະປະຂອງນິທານມະຫັດສະຈັນ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ຄວາມໝາຍ ແລະ ຈຸດພິເສດຂອງນິທານມະຫັດສະຈັນ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານມະຫັດສະຈັນ<br>- ເນື້ອໃນສ່ອງແສງຂອງນິທານມະຫັດສະຈັນ<br>- ສິລະປະຂອງນິທານມະຫັດສະຈັນ</td><td>ຄຳຖາມຫຼັກ (Questions):<br>1) ນິທານມະຫັດສະຈັນມີຄວາມໝາຍ ແລະຈຸດພິເສດແນວໃດ?<br>2) ນິທານມະຫັດສະຈັນກຳເນີດ ແລະ ການຂະຫຍາຍຕົວແນວໃດ?<br>3) ນິທານມະຫັດສະຈັນ ມີເນື້ອໃນສ່ອງແສງຫຍັງແດ່?<br>4) ນິທານມະຫັດສະຈັນ ມີສິລະປະແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງຄວາມໝາຍ, ຈຸດພິເສດ, ການກຳເນີດ. ການຂະຫຍາຍຕົວ, ເນື້ອໃນສ່ອງແສງ ແລະສິລະປະຂອງນິທານມະຫັດສະຈັນ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງ ຄວາມໝາຍ, ຈຸດພິເສດ, ການກຳເນີດ. ການຂະຫຍາຍຕົວ, ເນື້ອໃນສ່ອງແສງ ແລະສິລະປະຂອງນິທານມະຫັດສະຈັນ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ</td></tr>
</table>

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

| | |
|---|---|
| - ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | - ການສັງເກດກິດຈະກຳ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |

- **ສື່ການສອນມີ:**
  ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ວັນນະຄະດີຊັ້ນມັດທະຍົມປີທີ5, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.
- **ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອໃນ ເລື່ອງ "ທ້າວຈັນທະພານິດ" ແລະ ເລື່ອງ "ຂຸນບູລົມ"

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 4**

**ນິທານມະຫັດສະຈັນ**

**1. ຄວາມໝາຍ ແລະຈຸດພິເສດຂອງນິທານມະຫັດສະຈັນ** ( 10 ນາທີ)

**<u>ກິດຈະກຳ 1:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ນິທານມະຫັດສະຈັນມີຄວາມໝາຍ ແລະຈຸດພິເສດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (5 ນາທີ)

**1.1 ຄວາມໝາຍ**

ນິທານມະຫັດສະຈັນ ແມ່ນເລື່ອງທີ່ປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດແຕ່ງຂຶ້ນໃນລະບອບສັງຄົມທີ່ມີຊົນນັ້ນ.

ເນື້ອໃນຕົ້ນຕໍຂອງນິທານມະຫັດສະຈັນສ່ອງແສງການຕໍ່ສູ້ຊົນຊັ້ນ ແລະບັນຫາສັງຄົມອື່ນໆເຊັ່ນ: ປະຫວັດສາດ, ການດຳລົງຊີວິດ ແລະ ຄວາມປາຖະໜາຂອງສັງຄົມ.

ຕົວລະຄອນນິທານອັດສະຈັນແມ່ນຄົນ, ສັດສາວາສິ່ງ ແລະ ສິ່ງອື່ນໆທີ່ມີລັກສະນະເໜືອເຊື່ອ (ບຸນລ້ອມ ສີບຸນເຮືອງ ແລະຄະນະ, 2014).

**1.2 ຈຸດພິເສດ**

ນິທານບູຮານ ແມ່ນເລື່ອງພື້ນເມືອງປະເພດໜຶ່ງ ເຊິ່ງແມ່ນປະຊາຊົນຊາວຜູ້ອອກແຮງງານເປັນຜູ້ປະດິດແຕ່ງຂຶ້ນໃນສະໄໝບູຮານ ແຕ່ມັນໄດ້ຂະຫຍາຍຕົວໃນສັງຄົມທີ່ມີຊົນຊັ້ນ. ສະນັ້ນ, ເນື້ອໃນຕົ້ນຕໍແມ່ນສ່ອງແສງບັນດາຂໍ້

ຂັດແຍ່ງຂອງສັງຄົມ, ສ່ອງເຖິງຄວາມມຸ່ງມາດປາຖະໜາ ແລະ ມານະຈິດຂອງປະຊາຊົນຜູ້ອອກແຮງງານຢ່າງມີຊີວິດຊີວາ. ຕົວລະຄອນໃນນິທານບູຮານ ບໍ່ແມ່ນຮູບພາບສັນຍະລັກແຫ່ງການເຊື່ອຖືຟ້າແຖນ ແລະ ທຳມະຊາດຫາກແມ່ນຕົວລະຄອນທີ່ປະຊາຊົນ ປະດິດແຕ່ງຂຶ້ນເພື່ອໃຫ້ເປັນຕົວແທນຂອງຄົນໃນສັງຄົມຢ່າງມີຊີວິດຊີວາ. ເມື່ອເວົ້າເຖິງການປະກອບສ້າງໂຄງຮ່າງເຄີຍໄດ້ຈັດວາງໄປຕາມກາລະເທສະ, ແຕ່ຕໍ່າຫາສູງ. ຕົວລະຄອນໃນເລື່ອງໄດ້ຈັດແບ່ງອອກເປັນສອງຝ່າຍຢ່າງຈະແຈ້ງຄື: ຝ່າຍສິນທຳ ແລະ ຝ່າຍອະທຳ. ຕົວແທນຂອງຝ່າຍສິນທຳມັກຈະເປັນ ກຳ່ພ້າ (ຊາຍ ຫຼື ຍິງ) ທີ່ທຸກຍາກຂາດເຂີນແຕ່ດຸໝັ່ນພາກພຽງ, ຊື່ສັດ, ມີຄວາມເມດຕາປານີ ທັງອົງອາດກ້າຫານ. ສຳລັບຕົວລະຄອນຝ່າຍອະທຳນັ້ນ ມັກຈະເປັນພະຍາ ຫຼື ເສນາອາມາດຊັ້ນສູງຮັ່ງມີ ແຕ່ໂຫດຮ້າຍ ຄັບແຄບ, ຂີ້ຄ້ານ, ໂລບມາກໂລພາ ເພື່ອແກ້ໄຂຂໍ້ຂັດແຍ່ງທາງສັງຄົມ ແລະ ບັນຫາສັດຈະທຳຂອງປະຊາຊົນທີ່ວ່າ: “ສິນທຳຕ້ອງຊະນະອະທຳ” ຕົວລະຄອນທັງສອງຝ່າຍນັ້ນໄດ້ຕໍ່ສູ້ກັນດ້ວຍຫຼາຍຮູບແບບ, ສຸດທ້າຍຕົວລະຄອນຂອງຝ່າຍສິນທາ ກໍເອົາຊະນະຕົວລະຄອນຂອງຝ່າຍອະທຳໄດ້ (ກຽງແກ້ວ ນອນນະວົງ ແລະຄະນະ, 2002).

**2. ການກຳເນີດ ແລະການຂະຫຍາຍຕົວຂອງນິທານມະຫັດສະຈັນ.** (10 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

  1) ນິທານມະຫັດສະຈັນກຳເນີດ ແລະ ການຂະຫຍາຍຕົວແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບປິດຮຽນກິດຈະກຳ: (5 ນາທີ)

ນິທານບູຮານເກີດຂຶ້ນໃນສັງຄົມທີ່ເລີ່ມຕົ້ນມີການຜັນແຍກຊົນຊັ້ນ ແລະ ມີການແບ່ງອອກເປັນແຕ່ລະຄອບຄົວ. ໃນສັງຄົມເລີ່ມຕົ້ນມີຄົນຮັ່ງ ແລະ ຜູ້ທຸກ, ມີຜູ້ປົກຄອງ ແລະ ຜູ້ຖືກປົກຄອງ. ມັນເລີ່ມມີການຂະຫຍາຍຕົວແຮງໃນລະບອບສັງຄົມສັກດີນາ ເຊິ່ງແມ່ນສະໄໝຮຸ່ງເຮືອງຂອງສາສະໜາ. ດັ່ງນັ້ນ, ມັນໄດ້ສົ່ງຜົນສະທ້ອນເຖິງການປະດິດແຕ່ງ ນິທານຂອງລາວເຮົາຢ່າງເລິກເຊິ່ງພໍສົມຄວນ. ຜົນສະທ້ອນຂອງສາສະໜາພຸດ ທີ່ຖືກພວກສັກດີນາສວຍໃຊ້ ແຕ່ມາເບື້ອງຕົ້ນນັ້ນ, ໄດ້ພາໃຫ້ລັກສະນະຕໍ່ສູ້ຂອງນິທານບູຮານລາວ ຈຳນວນໜຶ່ງລົດນ້ອຍຖ້ອຍລົງ. ນິທານທີ່ໄດ້ຮັບຜົນສະທ້ອນຈາກສາສະໜາພຸດນັ້ນ, ຄູ່ຕໍ່ສູ້ປໍລະປັກຂອງຕົວລະຄອນກຳ່ພ້າເຊິ່ງເປັນຕົວແທນຂອງຝ່າຍສິນທຳ ແລະ ຝ່າຍປະຊາຊົນຜູ້ອອກແຮງງານນັ້ນ, ບໍ່ແມ່ນພະຍາທີ່ເຄີຍເປັນມາຢູ່ໃນນິທານບູຮານ ສ່ວນຫຼວງຫຼາຍເຊັ່ນ: ເລື່ອງ “ກຳ່ພ້າຜີນ້ອຍ” ເລື່ອງ “ກຳ່ພ້າງົວທອງ” ແລະ ອື່ນໆອີກ. ຫາກເປັນພຽງເສນາອາມາດຊັ້ນສູງໃດໜຶ່ງຫຼືເປັນພຽງແມ່ນ້າ, ສ່ວນພະຍາເອງ ຍັງເປັນຜູ້ມີສິນທຳ, ໜ້າເຄົາລົບຢຳເກງ, ມີບົດບາດຄືຜູ້ພິພາກສາ ທີ່ທຽ່ງທຳຜູ້ໜຶ່ງດັ່ງໃນເລື່ອງ: “ນາງເຕົ່າຄຳ”, “ນາງຫຼ້ານາງລຸນ” ເປັນຕົ້ນ. ເມື່ອເອົາຊະນະສັດຕູແລ້ວ ກໍບໍ່ໄດ້ຂຶ້ນປົກຄອງເມືອງແທນພະຍາ ຄືນິທານກຳ່ພ້າຜີນ້ອຍອີກ, ຫາກພຽງແຕ່ຕັ້ງໃຫ້ເປັນພຽງແຕ່ເສນາອາມາດຊັ້ນໃດໜຶ່ງຂອງພະຍາ ຫຼື ເປັນນາງກຳ່ພ້າກໍພຽງແຕ່ໄດ້ເປັນມະເຫສີຂອງພະຍາເທົ່ານັ້ນ. ໃນນິທານທີ່ມີຜົນສະທ້ອນຂອງສາສະໜາພຸດນີ້ຍັງມີເລື່ອງ: “ວຽນຕາຍວຽງເກີດ” ຫຼືໃຊ້ຊາດຕາມທັດສະນະຂອງພຸດທະສາສະນາ ອີກດ້ວຍ.

ນິທານບູຮານ ຫຼື ເລື່ອງເລົ່າພື້ນເມືອງອື່ນ ເວົ້າລວມ ແມ່ນມີກົກເຄົ້າ ມາຈາກການດຳເນີນຊີວິດ ຕົວຈິງ ຂອງປະຊາຊົນບັນດາເຜົ່າ ເຊິ່ງຕິດພັນກັບການຕໍ່ສູ້ຕ້ານໄພທຳມະຊາດ ແລະ ຕໍ່ສູ້ສັງຄົມ. ນິທານບູຮານມີເນື້ອໃນຕໍ່ສູ້ໄພທຳ

ມະຊາດ ແລະ ອະທິບາຍປາກົດການທໍາມະຊາດ ນັ້ນເຄີຍເປັນເລື່ອງກົກເຄົ້າມາຈາກເທບນິຍາຍ ຕົວລະຄອນເຖິງຈະມີຮູບຮ່າງຜິດປົກກະຕິ ແລະ ມີການປະພຶດທີ່ໜ້າງຶດງໍ້ອັດສະຈັນເຊັ່ນ: ເລື່ອງ "ທ້າວເຈັດໄຫ" , " ອ້າຍຕຶກຄຶກ "... ນິທານອັດສະຈັນເກີດຊົ່ວໄລຍະເວລາອັນຍາວນານ ແລະ ເກີດມາຈາກຫຼາຍສາເຫດຕ່າງກັນ. ສະນັ້ນ, ມັນຈຶ່ງມີຄວາມສາມາດສ່ອງແສງຕົວຈິງຂອງສັງຄົມຢ່າງຮອບດ້ານ; ຕາມທັດສະນະຂອງປະຊາຊົນ. ຫົວເລື່ອງກໍມີຄວາມອຸດົມສົມບູນ , ເນື້ອໃນກໍມີຫຼາຍບັນຫາ ແລະ ຫຼາຍສີສັນສົມຄວນ (ພູວົງ ໜໍ່ດາລາ ແລະຄະນະ, 2018).

**3. ເນື້ອໃນສ່ອງແສງຂອງນິທານມະຫັດສະຈັນ.** (20 ນາທີ)

**<u>ກິດຈະກໍາ 3:</u>**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ

  1) ນິທານມະຫັດສະຈັນ ມີເນື້ອໃນສ່ອງແສງຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (15 ນາທີ)

**3.1 ສ່ອງແສງທາງດ້ານພູມສັນຖານ, ພູຜາ ແລະ ປ່າດົງ.**

ໃນນິທານບູຮານ ໃນເມື່ອຄົນເຮົາໄດ້ມີສະຕິເປັນເຈົ້າທໍາມະຊາດ ແລະ ມີຄວາມສາມາດເອົາຊະນະກັບທໍາມະຊາດຢ່າງຈະແຈ້ງ, ທ້າວຕຶກຄຶກ ເມື່ອໃຫຍ່ຂຶ້ນມາ ໄດ້ມີຄວາມສົນໃຈວ່າ: ເປັນຫຍັງ? ພໍ່ແມ່, ໄທບ້ານ ແລະ ຕົນເອງຈຶ່ງມີຄວາມທຸກຍາກອຶດຢາກຂາດເຂີນແນວນີ້? ເມື່ອຮູ້ໄດ້ກົກປາຍສາເຫດຂອງມັນແລ້ວ, ລາວໄດ້ຕັດສິນໃຈເອົາກໍາລັງວັງຊາ ແລະ ຄວາມສາມາດອັນມະຫາສານຂອງຕົນ ບຸກເບີກຂຸດກິ່ນພູຜາ ປ່າດົງອັນຕຶບໜາສູງຊັນກັນດານໃຫ້ກາຍເປັນທົ່ງໄຮ່, ທົ່ງນາທີ່ກວ້າງໃຫຍ່ໄພສານ ແລະ ສ້າງເໝືອງປ້ານຝາຍອີກຫຼາຍແຫ່ງ ເພື່ອເອົານໍ້າເຂົ້າໃສ່ນາ. ນັບແຕ່ນັ້ນມາ, ຊາວບ້ານ ຊາວເມືອງຈຶ່ງທໍາມາຫາກິນໄດ້ຢ່າງສະດວກສະບາຍ, ຊີວິດການເປັນຢູ່ອີ່ມໜໍາສໍາລານຂຶ້ນ. ພາຍຫຼັງທີ່ໄດ້ສ້າງທົ່ງໄຮ່ ທົ່ງນາ ຢູ່ທາງພາກກາງ ແລະ ພາກໃຕ້ແລ້ວ. ທ້າວຕຶກຄຶກກໍໄດ້ສືບຕໍ່ສ້າງຢູ່ທາງພາກເໜືອອີກ. ໃນຂະນະທີ່ລາວກໍາລັງຂຸດພູຜາຢູ່ແຂວງຊຽງຂວາງນັ້ນ ເລີຍຖືກຜີອາຮັກທັກຄໍຕາຍ. ສະນັ້ນ, ຢູ່ຊຽງຂວາງຈຶ່ງຫາກໍເປັນພູພຽງ ແລະ ແຂວງຕ່າງໆຢູ່ທາງພາກເໜືອຈຶ່ງຍັງຄົງເປັນພູຜາຫຼາຍ, ຍ້ອນທ້າວຕຶກຄຶກໄປສ້າງບໍ່ທັນເຖິງເທື່ອ. ບົດເລື່ອງທ້າວຕຶກຄຶກຍັງເລົ່າກັນມາຢ່າງກວ້າງຂວາງໃນຫຼາຍທ້ອງຖິ່ນຢູ່ທາງພາກເໜືອຂອງລາວ ໂດຍເປັນຫຼາຍເລື່ອງຍ່ອຍຄື: ມີພູຜາ ແລະ ທົ່ງພຽງ, ພູສາມເສົ້າ ພູລູບ...ເພື່ອອະທິບາຍພູມສັນຖານ ແລະ ຈຸດພິເສດທາງທໍາມະຊາດຂອງແຕ່ລະທ້ອງຖິ່ນແລ້ວ ບົດເລື່ອງຍັງໄດ້ຍ້ອງຍໍສັນລະເສີນນໍ້າໃຈຕໍ່ສູ້ຕ້ານໄພທໍາມະຊາດ, ດັດສ້າງທາມະຊາດ ແລະນໍ້າໃຈດຸໝັ່ນພາກພຽນໃນການອອກແຮງງານສ້າງສາບ້ານເມືອງຂອງປະຊາຊົນບັນດາເຜົ່າ ຂອງລາວສະໄໝກ່ອນ. ບົດເລື່ອງ ທ້າວຕຶກຄຶກ ເຖິງວ່າ ມີລັກສະນະເຫຼືອເຊື່ອ ເພີດຈິດ ແລະ ມະຫັດສະຈັນທີ່ສຸດ ແຕ່ກໍບໍ່ແມ່ນການງົມງວາຍໄຝ່ຝັນ, ທ້າວຕຶກຄຶກເອງກໍບໍ່ໄດ້ມີວິເສດວິໂສເໝືອນດັ່ງຕົວລະຄອນທັງຫຼາຍໃນພື້ນສືບ ແລະ ເທບນິຍາຍ. ທ້າວຕຶກຄຶກ ໄດ້ອອກແຮງງານ ແລະ ທໍາມາຫາກິນເໝືອນດັ່ງຄົນເຮົາແທ້. ນິທານບູຮານຍັງສ່ອງແສງຮູບພາບທິວທັດທໍາມະຊາດອັນສວຍສົດງົດງາມ ແລະ ອຸດົມຮັ່ງມີຂອງປະເທດຊາດ, ທ້ອງຖິ່ນ, ບ້ານເກີດເມືອງນອນ. ຮູບພາບທໍາມະຊາດເຫຼົ່ານີ້ແມ່ນຮູບພາບທີ່ແກວ່ນເຄີຍໃກ້ສິດຕິດແທດກັບການດໍາລົງຊີວິດ ທໍາມາຫາກິນຂອງປະຊາຊົນບັນດາເຜົ່າ, ການພັດທະນາ ແລະ ການອະທິບາຍກົກເຄົ້າຮອງຮ່ອຍຂອງທໍາມະຊາດ. ນິທານບູຮານຍາມໃດກໍຕິດພັນກັບບັນຫາສັງຄົມ

ແລະ ພົວພັນຢ່າງແໜ້ນແຟ້ນກັບການເຄື່ອນໄຫວອວຽກງານຕົວຈິງຂອງຄົນເຮົາ, ເລື່ອງ " ພູທ້າວ ພູນາງ" ເປັນການກ່າວປະນາມໂທດກຳການກະທຳອັນປ່າເຖື່ອນ ຂອງອີ່ນາຍຍັກທີ່ມີຕໍ່ນາງສິບສອງຄົນ, ອັນເປັນການກ່າວປະນາມຄວາມອະທຳທີ່ປົກຄຸມສັງຄົມໃນສະໄໝນັ້ນ. ບໍ່ພຽງແຕ່ເທົ່ານັ້ນ, ບົດເລື່ອງຍັງໄດ້ອະທິບາຍສະຖານທີ່ຕ່າງໆທີ່ຕິດພັນກັບເຫດການປະຫວັດສາດ ໃນສະໄໝດຶກດຳບັນ ຂອງຊາດລາວ. ດັ່ງນັ້ນ, ຈຶ່ງມີຄົນຖືເອົາບົດເລື່ອງນີ້ເປັນພື້ນສືບ, "ພູບາຈຽງ ພູມະໂລງ" ເວົ້າເຖິງຄວາມບໍ່ສະເໝີພາບລະຫ່ວາງ ຄົນກັບຄົນໃນສັງຄົມທີ່ມີຊົນຊັ້ນ.

**3.2 ສ່ອງແສງຂໍ້ຂັດແຍ່ງໃນສັງຄົມ**

ນິທານບູຮານມີເນື້ອໃນສ່ອງແສງຄວາມຂັດແຍງຊົນຊັ້ນ ແລະ ຕໍ່ສູ້ຊົນຊັ້ນດ້ວຍຫຼາຍຮູບຫຼາຍແບບຕ່າງກັນ. ນິທານບູຮານໄດ້ພັນລະນາຕົວລະຄອນພະຍາ ເຊິ່ງເປັນຕົວແທນໃຫ້ແກ່ຊົນຊັ້ນປົກຄອງຜູ້ຮັ່ງມີ, ມີສິດອານາດເໜືອກວ່າຄົນອື່ນໆ, ຮ້າຍກາດແຕ່ໂງ່ຈ້າ. ກົງກັນຂ້າມ ຊາວໄຮ່ນາພັດເປັນຕົວລະຄອນທີ່ທຸກຈົນ, ສັດຊື່, ດຸໝັ່ນພາກພຽນ, ສະຫຼຽວສະຫຼາດ ແລະ ອົງອາດກ້າຫານ. ຢູ່ໃນລະບອບສັງຄົມສັກດີນາ ແມ່ນສາເຫດຕົ້ນຕໍທີ່ພາໃຫ້ຊາວໄຮ່ນາມີຊີວິດຢູ່ຢ່າງທຸກຍາກລຳບາກ. ພວກເຂົາຍາມໃດກໍ່ຊອກທຸກວິທີ ເພື່ອຂູດເນື້ອເຖືອໜັງປະຊາຊົນຜູ້ອອກແຮງງານ. ການພົວພັນລະຫ່ວາງຄົນກັບຄົນຢູ່ໃນສັງຄົມນັ້ນ ເຕັມໄປດ້ວຍການປໍລະປັກອາຄາດບາດໝາງເຊິ່ງກັນ ແລະ ກັນຕາມແບບ " ຄົນເປັນສັດຕູຂອງຄົນ ", " ປາໃຫຍ່ກິນປານ້ອຍ ", " ກໍ່າພ້າງົວທອງ ", " ກໍ່າພ້າຜີນ້ອຍ "...ລ້ວນແຕ່ມີເນື້ອໃນກ່າວປະນາມໂທດກຳຂອງຊົນຊັ້ນກົດຂີ່ ແລະ ທັງຍ້ອງຍໍສັນລະເສີນຕໍ່ສູ້ບໍ່ຍອມຈຳນົນຂອງປະຊາຊົນຜູ້ອອກແຮງງານ. ການຕໍ່ສູ້ຂອງປະຊາຊົນຜູ້ອອກແຮງງານຕ້ານກັບການກົດຂີ່ຂູດຮີດຂອງຊົນຊັ້ນຜູ້ປົກຄອງໃນນິທານນັ້ນຢ່າງລະອິດລະອ໊ຽວຢືດເຍື້ອຍາວນານແຕ່ສຸດທ້າຍກໍ່ໄດ້ຮັບໄຊຊະນະຢ່າງສະຫງ່າງາມ.

ແນ່ນອນບົນເສັ້ນທາງກ້າວເດີນໄປສູ່ໄຊຊະນະ ແລະ ຄວາມສຸກຂອງເຂົາເຈົ້ານັ້ນ ບາງເທື່ອຕົວລະຄອນເອກເຊິ່ງສ່ວນໃຫຍ່ເປັນທ້າວກໍ່າພ້ານັ້ນ ຍັງຖືກທ່າຮັບຢູ່ ບໍ່ແມ່ນຜູ້ລິງມືໂດຍກົງຕ້ອງໄດ້ຮັບການອຸດໜູນຊ່ວຍເຫຼືອຈາກກຳລັງມະຫັດສະຈັນທີ່ບໍ່ເຄີຍມີຢູ່ໃນຊີວິດຈິງຂອງຄົນເຮົາເຊັ່ນ: ພະລືສີ, ເທວະດາ, ສັດສາວາສິ່ງ ແລະ ສິ່ງວັດຖຸທີ່ສັກສິດມະຫັດສະຈັນອື່ນໆ. ການຊ່ວຍເຫຼືອຂອງກຳລັງມະຫັດສະຈັນເຫຼົ່ານັ້ນ ເປັນເງື່ອນໄຂ ແລະ ຮູບການຕໍ່ສູ້ຂອງທ້າວກໍ່າພ້າຜີນ້ອຍ, ທ້າວກໍ່າພ້າງົວທອງ...

ຕົວລະຄອນສົນທຳເວລາໃດກໍໄດ້ຮັບໄຊຊະນະ ແລະ ໄດ້ຮັບການຍ້ອງຍໍສັນລະເສີນ, ສ່ວນຝ່າຍອະທຳນັ້ນ ໃນທີ່ສຸດກໍຖືກປາລະໄຊ ແລະ ຖືກລົງໂທດຢ່າງເໝາະສົມ; ນີ້ແມ່ນຜົນໄດ້ຮັບ ແລະ ທັງເປັນການມ້ວນ ທ້າຍໃນນິທານບູຮານເຊິ່ງສະແດງໃຫ້ເຫັນຢ່າງຈະແຈ້ງເຖິງລັກສະນະຊົນຊັ້ນ ແລະ ມະນຸດສະທຳອັນສູງສົ່ງຂອງປະຊາຊົນ. ແຕ່ທຸກສິ່ງທຸກຢ່າງເຫຼົ່ານັ້ນຍັງຢູ່ໃນຂອບເຂດຄວາມໝາຍໃນດ້ານຄຸນສົມບັດ ສ່ວນວ່າດ້ານການເມືອງນັ້ນຍັງບໍ່ທັນເລິກເຊິ່ງເທື່ອ.

**3.3 ສ່ອງແສງເຖິງແບບແຜນດຳລົງຊີວິດຮີດຄອງປະເພນີ...**

ການດຳລົງຊີວິດປະຈຳວັນຂອງປະຊາຊົນ ເຄີຍຕິດພັນກັບເງື່ອນໄຂທຳມະຊາດ ໃນແຖບຊົນນະບົດສະໄໝກ່ອນເຊັ່ນ: ການເຮັດໄຮ່ໃສ່ນາ, ເຮັດລີ່ເຮັດຕ້ອນ, ໂຮ່ເນື້ອຍິງສັດ...ຕົວລະຄອນກໍ່າພ້າເປັນຄົນທີ່ທຸກຍາກລຳບາກຂາດເຂີນ, ບາງເທື່ອເປັນຄົນທີ່ມີຮູບໂສມພະນົມພັນຂີ້ຮ້າຍຖືກສັງຄົມດູຖູກໝິ່ນປະໝາດ...ແຕ່ຍ້ອນຄວາມສັດຊື່, ດຸໝັ່ນອອກແຮງງານ, ມີຄວາມສາມັກຄີຮັກແພງ ແລະ ຊ່ວຍເຫຼືອຜູ້ອື່ນໆສຸດທ້າຍຕົວລະຄອນກໍ່າພ້າກໍກາຍເປັນຄົນ

ງາມ, ຮັ່ງມີ ຫຼື ບາງເທື່ອກໍມີເມຍງາມອີກດ້ວຍ; ເຊັ່ນ: ເລື່ອງ " ອ້າຍທູດທິດແສນເປົາ ", " ກ່ຳພ້າໝາກເດື່ອ" , " ກ່ຳພ້າໝາກສ້ານ ", " ກ່ຳພ້າຜີນ້ອຍ ", "ນາງອັ່ນ ກັບ ຊຽງຂຽວ"...ໄປຄຽງຄູ່ກັບການດຳລົງຊີວິດທາງດ້ານວັດຖຸ ນິທານບູຮານຍັງສ່ອງແສງເຖິງການດຳລົງຊີວິດທາງດ້ານຈິດໃຈຂອງປະຊາຊົນບັນດາເຜົ່າເຊັ່ນ: ການເຊື່ອຖືຮີດຄອງປະເພນີ, ການເຮັດບຸນສິນກິນທານ, ທັດສະນະຄຸນສົມບັດ, ຍ້ອງຍໍຄວາມສະຫຼາດມີພິກໄຫວ, ຄວາມມຸ່ງມາດປາຖະໜາ ແລະ ນ້ຳໃຈມະນຸດສະທຳຕ່າງໆ. ນອກນັ້ນ, ບົດເລື່ອງຍັງມີຄວາມໝາຍຕິຕຽນແບບເບົາບາງດ້ວຍຈິດໃຈກໍສ້າງຕໍ່ຕົວລະຄອນທີ່ມີນິດໄສຂີ້ຄ້ານມັກງ່າຍ. ດັ່ງນັ້ນ, ນິທານປະເພດນີ້ເຄີຍມີສຽງຫົວຕຳນິທີ່ມີລັກສະນະເຍາະເຍີ້ຍສຽດສີແຕ່ຫາກບໍ່ເຖິງຂັ້ນເຮັດໃຫ້ບັນຍາກາດເຄັ່ງຂຶມ. ນິທານບູຮານລາວໄດ້ສ່ອງແສງຈຸດອ່ອນທີ່ຍັງຄ້າງຄາໃນແນວຄິດຂອງປະຊາຊົນສະ ໄໝກ່ອນຢ່າງຈະແຈ້ງ. ນອກນັ້ນ, ກໍໄດ້ພັນລະນາທ້າວກ່ຳພ້າ ຫຼື ບັນດາຕົວລະຄອນທີ່ຖືກກົດຂີ່ຂູດຮີດອື່ນໆເປັນຕົວລະຄອນອຸດົມການ.ໃນທີ່ສຸດ, ຕົວລະຄອນເຫຼົ່ານີ້ກໍໄດ້ຮັບຄວາມສຸກແບບອຸດົມການ ຕາມທັດສະນະຂອງປະຊາຊົນສະໄໝນັ້ນ ຄືຫຼັງຈາກທີ່ຮັບການໄຊຊະນະແລ້ວ ກໍເອົາລູກສາວຂອງພະຍາເປັນເມຍ ແລະ ໄດ້ຂຶ້ນຄອງເມືອງຄືກັນກັບພະຍາກ່ອນນັ້ນ. ສ່ວນຕົວລະຄອນຜູ້ດີ, ຜູ້ສະຫຼາດອື່ນໆ ຖ້າບໍ່ໄດ້ເປັນພະຍາກໍໄດ້ເປັນຄົນຮັ່ງມີ, ມີໄຮ່ນາກວ້າງຂວາງ, ມີງົວຄວາຍຢ່າງຫຼວງຫຼາຍ; ແນ່ນອນວ່ານີ້ເປັນພຽງຄວາມມຸ່ງມາດປາຖາໜາແບບເຫຼືອເຊື່ອເພີ້ນຈິດ ແລະ ມະຫັດສະຈັນຂອງນິທານເທົ່ານັ້ນ (ກຽງແກ້ວ ນອນນະວົງ ແລະຄະນະ, 2002).

4. **ສິລະປະຂອງນິທານມະຫັດສະຈັນ** (20 ນາທີ)

**<u>ກິດຈະກຳ 4:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ນິທານມະຫັດສະຈັນ ມີສິລະປະແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (15 ນາທີ)

ນິທານອັດສະຈັນແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງທີ່ມີລັກສະນະພິເສດຂອງມັນທາງດ້ານເນື້ອໃນ ແລະ ຮູບການ. ເພື່ອຕອບສະໜອງກັບການເລົ່າ ແລະ ຈື່ຈຳໄດ້ງ່າຍນັ້ນ ນິທານອັດສະຈັນໄດ້ມີໂຄງປະກອບສ້າງຕາມທາງຊື່. ບົດເລື່ອງໄດ້ສ້າງຂຶ້ນຕາມກາລະເທສະຂອງມັນ. ໝາຍຄວາມວ່າ ປາກົດການໃດເກີດມີຂຶ້ນກ່ອນກໍເລົ່າກ່ອນ. ປາກົດການໃດເກີດມີຂຶ້ນຕາມຫຼັງກໍເລົ່າຕາມຫຼັງ, ຕົວລະຄອນເອກເປັນຕົວຕັ້ງຕົວ ຕີເຮັດໃຫ້ບົດເລື່ອງຂະຫຍາຍຕົວແຕ່ບັ້ນນີ້ໄປຫາບັ້ນນັ້ນຢ່າງເກາະກ່າຍກັນຄັກແນ່. ແນ່ນອນວ່າໄປຄຽງຄູ່ກັບບັນຫາໃຈກາງ ບັນຫາໃຫຍ່ຂອງບົດເລື່ອງແລ້ວຍັງມີຫຼາຍບັນຫາປີກຍ່ອຍອ້ອມຂ້າງ. ແຕ່ມັນກໍຂະຫຍາຍຕົວໃນໄລຍະສັ້ນໆທີ່ສຸດ ແລ້ວກໍກ້າວເຂົ້າສູ່ບັນຫາໃຈກາງຄືເກົ່າ. ການສ້າງເລື່ອງຂອງນິທານອັດສະຈັນຕາມທາງຊື່ແບບນີ້ ມີຜົນໃນການຈື່ຈຳ. ເພາະວ່າມັນຈະກະທັດຮັດ, ງ່າຍດາຍ ແຕ່ກໍມີຂໍ້ຈາກັດຢູ່ບາງອັນເຊັ່ນ: ເມື່ອຢາກເໜັ້ນໜັກບັນຫາໃດບັນຫາໜຶ່ງດ້ານເນື້ອໃນຄວາມໝາຍຂອງບົດເລື່ອງກໍບໍ່ໄດ້ດີ. ບາງຄັ້ງຄາວກໍເຮັດໃຫ້ບົດເລື່ອງຈືດຈາງອີກດ້ວຍ.

ການພັນລະນາໃນນິທານ ມີລັກສະນະລວມໆບໍ່ລະອຽດ. ນິທານສ່ວນຫຼາຍຈະຂຶ້ນຕົ້ນດ້ວຍຄຳວ່າ: "ແຕ່ກີ້ແຕ່ກ່ອນ " ເຊັ່ນ: ແຕ່ກີ້ແຕ່ກ່ອນ ຢູ່ບ້ານໜຶ່ງ ຍັງມີທ້າວກ່ຳພ້າທຸກຍາກຂາດເຂີນ... ມີນິທານອັດສະຈັນຫຼາຍບົດ ຍັງມີຊື່ຂອງຕົວລະຄອນ ແຕ່ຊື່ນັ້ນກໍມີລັກສະນະລວມໆຕາມຈຸດພິເສດ. ຄວາມສາມາດຊັ້ນຕຳແໜ່ງ ແລະ ເຄີຍມີການປ່ຽນແປງເລື້ອຍໆ. ການພັນລະນາທິວທັດທຳມະຊາດ ໃນນິທານອັດສະຈັນບໍ່ມີຈຸດປະສົງເພື່ອສະແດງຄວາມປະເອີບໃຈຂອງຄົນເຮົາຕໍ່ພາບທຳມະຊາດເຫຼົ່ານັ້ນ, ຫາກພຽງແຕ່ຮັບໃຊ້ການຂະຫຍາຍຕົວຂອງບັ້ນ ແລະ ກະທູ້ຂອງບົດ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ເລື່ອງເທົ່ານັ້ນ, ການພັນລະນາທາມະຊາດກໍ່ມີການຫັນປ່ຽນຕາມຜູ້ເລົ່າເລື່ອງ, ການພັນລະນາຕົວລະຄອນກໍມີລັກສະນະງ່າຍດາຍ ແລະ ບໍ່ລະອຽດ. ສ່ວນຫຼາຍກໍພັນລະນາແຕ່ບາງລັກສະນະ ແລະ ຈຸດພິເສດລວມໆ ຂອງຮູບຮ່າງທາງນອກ. ບໍ່ຄ່ອຍໄດ້ພັນລະນາເຂົ້າເລິກ ທາງແນວຄິດຈິດໃຈຂອງຕົວລະຄອນ. ກົງກັນຂ້າມໃນນິທານອັດສະຈັນເພິ່ນພັດເອົາໃຈໃສ່ພັນລະນາເຖິງການກະທຳຂອງຕົວລະຄອນຫຼາຍກວ່າ. ເອົາການກະທຳນັ້ນ ເພື່ອວັດແທກເຖິງແນວຄິດຈິດໃຈ ໂດຍບໍ່ຈຳເປັນເວົ້າຍືດຍາວ. ຍ້ອນນິທານອັດສະຈັນແມ່ນປະເພດເລົ່າເລື່ອງ. ສະນັ້ນ, ການພັນລະນາຄົນ, ພັນລະນາພາບ...ກໍລ້ວນແຕ່ມີລັກສະນະລວມໆ ແທດເໝາະກັບການເລົ່າປາກເປົ່າ, ເຮັດໃຫ້ບົດເລື່ອງສັ້ນເຂົ້າ, ກະທັດຮັດໜັກແໜ້ນ, ເລົ່າໄດ້ງ່າຍ ແລະ ຈື່ຈຳໄດ້ໄວ.

ເພື່ອສ່ອງແສງເຖິງຂໍ້ຂັດແຍ່ງໃນຊີວິດຂອງຄົນເຮົາ, ສ່ອງແສງເຖິງປາກົດການຕ່າງໆທີ່ເກີດຂຶ້ນຈາກການປະທະຂອງແຕ່ລະຊັ້ນຄົນຢູ່ໃນສັງຄົມ. ນິທານອັດສະຈັນເຄີຍໄດ້ຍົກ ສະພາບທີ່ມີລັກສະນະກົງກັນຂ້າມກັນ ຂຶ້ນມາສົມທຽບເຊັ່ນ: ການຈັດວາງຕົວລະຄອນໃນນິທານອັດສະຈັນ ແບ່ງອອກເປັນສອງຝ່າຍຢ່າງຈະແຈ້ງ. ການຍົກສະພາບທີ່ກົງກັນຂ້າມກັນຂຶ້ນມານັ້ນ ເຮັດໃຫ້ຜູ້ຟັງສຳນຶກເຖິງທາດແທ້ຂອງຕົວລະຄອນແຕ່ລະຝ່າຍຢ່າງເລິກເຊິ່ງ. ຮູບການສິລະປະແບບນີ້ຂອງນິທານອັດສະຈັນ ໄດ້ຮັບໃຊ້ເນື້ອໃນຂອງບົດເລື່ອງຢ່າງຕັ້ງໜ້າ ເພາະມັນເປັນການຈຳແນກສິນທຳ ກັບອະທຳ, ຈຳແນກມິດ ກັບສັດຕູຢ່າງຈະແຈ້ງ.

ການເວົ້າໂຍກ ແລະ ໃຊ້ຈິດສຳນຶກ ແມ່ນຮູບການໜຶ່ງໃນການປະດິດແຕ່ງນິທານອັດສະຈັນເຊັ່ນ: “ເລື່ອງທ້າວເຈັດໄຫ ”, “ອ້າຍຕຶກຄຶກ ”...ໄດ້ປະດິດແຕ່ງດ້ວຍການໃຊ້ຈິດສຳນຶກເວົ້າໂຍກໃນລະດັບສູງທີ່ສຸດ. “ທ້າວເຈັດໄຫຫາກໍ່ເກີດອອກຈາກທ້ອງແມ່ກໍ່ກິນເຂົ້າໝົດເຈັດໄຫຈິ່ງຄ່ອຍອີ່ມ” ແລະ ມີຄວາມສາມາດແບກຕົ້ນໄມ້ໃຫຍ່ໄດ້ ນັບທັງກິ່ງທັງກ້ານມາບ້ານຢ່າງສະບາຍ...ທ້າວຕຶກຄຶກຍິ່ງມະຫັດສະຈັນກວ່ານັ້ນອີກ, ທ້າວເປັນຕົວລະຄອນທີ່ຢູ່ເໜືອຄວາມສຳນຶກ. ໃນນິທານເລື່ອງອື່ນໆ ພະລືສີ, ສັດສາວາສິ່ງ ແລະ ວັດຖຸສິ່ງຂອງທີ່ຢາກຮູ້ ແລະ ມີລິດເດດພິເສດ, ໄດ້ຊ່ວຍໃຫ້ທ້າວກໍ່າພ້າຕໍ່ສູ້ເອົາຊະນະກັບພະຍາ. ລັກສະນະເຫຼືອເຊື່ອ ແລະ ມະຫັດສະຈັນ. ປະຊາຊົນໄດ້ໃຊ້ຈິດສຳນຶກຂອງຕົນປະດິດແຕ່ງຮູບພາບ, ຮູບປະພັນແບບເຫຼືອເຊື່ອເຫຼົ່ານີ້ຂຶ້ນມາ ກໍເພື່ອແກ້ໄຂບັນຫາ ເຊິ່ງໃນຊີວິດບໍ່ທັນເຮັດໄດ້ຕາມຄວາມມຸ່ງມາດປາຖະໜາຂອງປະຊາຊົນເທື່ອ.

ຮູບການລົ້ມຄືນໃນນິທານອັດສະຈັນ ມີຄຸນປະໂຫຍດ ແລະ ຜົນໄດ້ຮັບຕ່າງກັນ. ການທີ່ລົ້ມໄປລົ້ມມາບັນຫາດຽວກັນນັ້ນ ມີຜົນດີໃນການຍົກເນື້ອໃນແນວຄິດ ຂອງບົດເລື່ອງໃຫ້ສູງຂຶ້ນຕື່ມ. ການລົ້ມໄປລົ້ມມາ ຫຼື ວຽນຕາຍວຽນເກີດນັ້ນ ດ້ານໜຶ່ງກໍເປັນຜົນສະທ້ອນມາຈາກແນວຄິດຂອງສາສະໜາພຸດຢ່າງຈະແຈ້ງ. ແຕ່ໃນດ້ານໜຶ່ງອີກພັດໄດ້ສະແດງເຖິງນໍ້າໃຈຕໍ່ສູ້ອັນເດັດດ່ຽວໜຽວແໜ້ນ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນອີກດ້ວຍ. ບາງເທື່ອສຽງເວົ້າເກີດມີສຽງຫົວຂຶ້ນ, ສຽງຫົວອັນນີ້ຕົ້ນຕໍກໍແມ່ນ ປະກອບສ້າງບັນຍາກາດມ່ວນຊື່ນຂຶ້ນໃນບົດເລື່ອງ ແລະ ໃນບາງກໍລະນີມັນກໍ່ພົວພັນໂດຍກົງເຖິງເນື້ອໃນແນວຄິດຂອງບົດເລື່ອງອີກ.

ນິທານອັດສະຈັນມີບົດບາດສຳຄັນໃນວັນນະຄະດີພື້ນເມືອງ ປະເພດຄຳຮ້ອຍແກ້ວຂອງລາວເຮົາ, ມັນກຳເນີດ ແລະ ຂະຫຍາຍຕົວຕະຫຼອດຊົ່ວໄລຍະຍາວນານໃນລະບອບສັງຄົມທີ່ມີຊົນຊັ້ນ. ດັ່ງນັ້ນ, ຈິ່ງບໍ່ປາສະຈາກຂໍ້ຈຳກັດບາງຢ່າງ ເຊິ່ງຈະຕ້ອງໄດ້ຕຳນິວິຈານ ແລະ ຕ້ອງມີການເລືອກເຟັ້ນ ໃນການຄົ້ນຄວ້າ, ສິດສອນ ແລະ ຮໍ່າຮຽນ. ລັກສະນະເຫຼືອເຊື່ອ ແລະ ມະຫັດສະຈັນໃນນິທານປະເພດນີ້ ມີພື້ນຖານໃນການສືບທອດມູນເຊື້ອ ມະຫັດສະຈັນ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ໃນເທບນິຍາຍ, ນິທານບາງເລື່ອງກໍມີສີສັນງົດງາມ ຂອງສາສະໜາ, ຖ້າຮູ້ລອກເປືອກສາສະໜາຂອງມັນອອກແລ້ວກໍຈະເຫັນຄຸນຄ່າອັນຈົບງາມທາງດ້ານເນື້ອໃນຄວາມໝາຍ ແລະ ຮູບການປະດິດແຕ່ງອັນມີລັກສະນະຊາດຢ່າງໜັກແໜ້ນເປັນພິເສດຂອງນິທານພື້ນເມືອງລາວ (ກຽງແກ້ວ ນອນນະວົງ ແລະຄະນະ, 2002).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
    - ຄວາມໝາຍ ແລະ ຈຸດພິເສດຂອງນິທານມະຫັດສະຈັນ
    - ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານມະຫັດສະຈັນ
    - ເນື້ອໃນສ່ອງແສງຂອງນິທານມະຫັດສະຈັນ
    - ສິລະປະຂອງນິທານມະຫັດສະຈັນ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1 ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ບຸນລ້ອມ ສີບຸນເຮືອງ ແລະຄະນະ. (2014). ແບບຮຽນວັນນະຄະດີ ຊັ້ນມັດທະຍົມສຶກສາປີທີ 5. ກະຊວງສຶກສາທິການ ແລະກິລາ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ຄູສອນປະຈຳວິຊາ



ປທ. ສົມທະເພີຍ ສີວົງສັກ